# ໂຮງຮຽນວັນອາທິດ

**ວັນອາທິດທີ 9 ກໍຣະກະດາ 2017 (07- 09- 2017)**

---

## ໃຫ້ກຳລັງໃຈຊຶ່ງກັນແລະກັນ

*ດົນປານໃດແລ້ວ ທີ່ທ່ານເຫັນບາງສິ່ງແຜ່ລາມໄປເໝືອນເຊື້ອໄວຣັສ?*

**ຈຸດສຳຄັນໃນບົດຮຽນ**: ການໃຫ້ກຳລັງໃຈຄົນອື່ນໃນຄວາມສັມພັນຂອງເຂົາເຈົ້າກັບພຣະຄຣິດແລະຕໍ່ກັນແລະກັນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຈົນເຖິງທຸກມື້ນີ້, ຍັງມີບໍ່ຫຼາຍຄົນທີ່ຮູ້ຈັກພະຍາດເອມີໂອສໂຕຣຟິກກ້າມເນື້ອ່ອນແຮງ(**ALS** ), ທີ່ຍັງເອີ້ນອີກວ່າພະຍາດຂອງລູຍ ເກຣິກ ເປັນພະຍາດທີ່ບໍ່ສາມາດປິ່ນປົວໄດ້, ປ່ອຍລົງໄປເທື່ອລະເລັກລະນ້ອຍ, ກ້າມເນື້ອຈະອ່ອນແຮງລົງໄປເລື້ອຍໆ ຈົນໃນທີ່ສຸດກໍເຖິງແກ່ຄວາມຕາຍ. ດັ່ງນັ້ນການແຂ່ງຂັນເຣື່ອງຖັງນ້ຳກ້ອນຈຶ່ງມີຂຶ້ນໃນຣະດູຮ້ອນຂອງປີ 2014. ຜູ້ແຂ່ງຂັນໄດ້ທ້າທາຍກັນຖອກນ້ຳກ້ອນແລະນ້ຳລົງໃສ່ທີ່ຫົວຂອງຝ່າຍກົງກັນຂ້າມ ເພື່ອຍອມຮັບເອົາຄວາມຮູ້ສຳລັບ **ALS** ແລະປຸກຣະດົມໃຫ້ມີການບໍຣິຈາກເງິນເພື່ອການຄົ້ນຄວ້າ. ເຖິງຢ່າງໃດກໍຕາມການແຂ່ງຂັນນີ້ຈະເປັນການທ້າທາຍຊຶ່ງກັນແລະກັນ.

ຂອບໃຈນຳວີດີໂອເທັບທີ່ປະກາດອອກຊື່ມວນຊົນໃນສັງຄົມ, ແນວຄວາມຄິດທີ່ຕື່ນຕາຕື່ນໃຈ. ຄົນໃນທຸກໆປະເທດແລະຄົນທົ່ວທັງໂລກຮຽນແບບການກະທຳແລະນຳເອົາການທ້າທາຍນັ້ນ. ໃນທ້າຍປີຂອງປີ 2014 ມີຄົນຈຳນວນໜ້ອຍທີ່ບໍ່ຮູ້ພະຍາດທີ່ເຮັດໃຫ້ເຖິງຕາຍນີ້. ທີ່ສຳຄັນຫຼາຍກໍຄື ໄດ້ຮັບເງິນບໍຣິຈາກຫຼາຍກວ່າ $100 ມິນລຽນໂດລາເພີ້ມຂຶ້ນ, ຍັງໄດ້ເພີ້ມຂຶ້ນອີກສາມຕໍ່ເພື່ອໃຊ້ເປັນງົບປະມານໃນການຄົ້ນຄວ້າ.

ຄຣິສຕຽນສມັຍເລີ້ມແລກບໍ່ຕ້ອງການຖັງນ້ຳກ້ອນເປັນແຮງບັນດານໃຈໃນການທ້າທາຍພວກເຂົາໃນການແບ່ງປັນຂ່າວເຣື່ອງພຣະຄຣິດ. ເຂົາເຈົ້າເປັນຂ່າວສານທີ່ມີຊີວິດ, ແລະເຂົາເຈົ້າມີຄວາມກະຕືລືລົ້ນໃນການປະກາດຂ່າວດີ. ໃນປຶ້ມພຣະທັມກິຈການ, ພວກເຮົາເຫັນຊາຍຄົນນຶ່ງຊື່ບາຣະນາບາ ຜູ້ທີ່ນຳເອົາການທ້າທາຍໃນການຕິດຕາມພຣະຄຣິດແລະໃຊ້ເວລາຕລອດຊີວິດຂອງເພິ່ນໜຸນໃຈຄົນອື່ນໃຫ້ເຮັດຢ່າງດຽວກັນ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**ສຶກສາພຣະຄັມພີ**

**1. <u>ກິຈການ 11:19-21</u>:**

*19ຝ່າຍຄົນທັງຫລາຍທີ່ແຕກກະຈັດກະຈາຍໄປເພາະການທຸກລຳບາກເນື່ອງຈາກຊະເຕຟາໂນ ກໍພາກັນໄປຍັງເມືອງ*
*ຟອຍນີເກ, ເກາະກຸບໂຣ,ແລະເມືອງອັນຕີໂອເຊັຽ ເຂົາບໍ່ໄດ້ກ່າວພຣະທັມແກ່ຜູ້ໃດນອກຈາກພວກຢິວຝ່າຍດຽວ. 20ແຕ່*
*ໃນພວກເຂົາມີບາງຄົນເປັນຊາວເກາະກຸບໂຣແລະຊາວກີເຣເນ ເມື່ອມາເຖິງເມືອງອັນຕີໂອເຊັຽນັ້ນກໍໄດ້ກ່າວກັບຊາວ*
*ກຣີກເໝືອນກັນ ໂດຍໄດ້ປະກາດຂ່າວປະເສີດເຣື່ອງພຣະເຢຊູເຈົ້າ. 21ແລະຣິດອຳນາດຂອງອົງພຣະຜູ້ເປັນເຈົ້າກໍສະ*
*ຖິດຢູ່ກັບເຂົາ ຄົນເປັນຈຳນວນຫລາຍທີ່ເຊື່ອກໍໄດ້ກັບໃຈຕ່າວຄືນມາຫາອົງພຣະຜູ້ເປັນເຈົ້າ*

ມີສອງລັກສະນະພິເສດທີ່ກ່ຽວກັບຄຣິສຕະຈັກໃນສມັຍເລີ້ມແລກຄື: ການແຕກກະຈັກກະຈາຍໃນກຸ່ມຊາວຢິວ, ແລະເປັນການກະຈັກກະຈາຍໄປທົ່ວຂົງເຂດກຸງເຢຣູຊາເລັມ. ເຫດການທັງໝົດນັ້ນເກີດຂຶ້ນເມື່ອຊະເຕຟາໂນຖືກຂ້າ ( ກິຈການ 7: 58-8: 1). ຊະເຕຟາໂນເປັນຜູ້ທຳອິດທີ່ຍອມສະລະຊີວິດເພື່ອຄວາມເຊື່ອຂອງຕົນໃນຄຣິສຕະຈັກ, ແລະການຕາຍຂອງລາວເປັນສັນຍານປະກາຍໄຟຂອງການຖືກກົ່ກວນຂູ່ເຂັນຕໍ່ສູ້ຄຣິສຕຽນໃນກຸງເຢຣູຊາເລັມ ດ້ວຍເຫດນີ້, ຜູ້ທີ່ເຊື່ອຈຶ່ງກະຈັກກະຈາຍໄປຢູ່ທົ່ວທຸກບ່ອນຕລອດຢູດາຍແລະສະມາເຣັຽ.

ຂອບພຣະຄຸນພຣະເຈົ້າ, “ ພວກຜູ້ທີ່ແຕກກະຈັກກະຈາຍໄປນັ້ນໄດ້ປະກາດພຣະຄຳພຣະເຈົ້າຕາມເສັ້ນທາງທີ່ເຂົາເຈົ້າໄປ”( ກິຈການ 8:4). ຈາກຄວາມເຂົ້າໃຈຂອງພວກເຮົາສະແດງໃຫ້ເຫັນວ່າຜູ້ທີ່ເຊື່ອທີ່ແຕກກະຈັກກະຈາຍໄປໃນສາມສະຖານທີ່ນີ້: ຟອຍນີເກ, ເກາະກຸບໂຣມ, ແລະອັນຕີໂອເຊັຽ. ເຂົາເຈົ້າໄດ້ແບ່ງປັນຂ່າວປະເສີດໃນສະຖານທີ່ເຫຼົ່ານີ້, ເຂົາເຈົ້າໄດ້ແບ່ງປັນຂ່າວປະເສີດກັບ “ ຄົນອື່ນນຳ ນອກຈາກຄົນຢິວ.” ດ້ວຍເຫດໃດ?ເພາະຄຣິສຕຽນເລີ້ມແລກຈຳນວນຫຼາຍມີຄວາມຄິດເຫັນໃນຄວາມເຊື່ອຂອງເຂົາເຈົ້າວ່າ ພຣະຄຣິດເປັນເໝືອນມໍຣະດົກສືບທອດຂອງຊາວຢິວ. ອີກປະການນຶ່ງ, ເປັນການອຳນວຍຄວາມສະດວກຂອງເຂົາເຈົ້າໃນການແບ່ງປັນຂ່າວປະເສີດກັບຄົນຢິວ.

ໃນເຫດການທີ່ຄ້າຍຄືກັນໃນອັນຕີເຊັຽ, ໃນແຕ່ລະບ່ອນທີ່ຜູ້ເຊື່ອ "ໄດ້ເລີ້ມຕົ້ນປະກາດຕໍ່ຊາວກຣີກຊຶ່ງເປັນການປະກາດຢ່າງຕັ້ງອົກຕັ້ງໃຈໃນຂ່າວດີກ່ຽວກັບເຣື່ອງອົງພຣະເຢຊູພຣະຜູ້ເປັນເຈົ້າ.” ຂ່າວດີໄດ້ຜັກດັນເຂົາເຈົ້າໃຫ້ອອກໄປຈາກການປະກາດຕາມຄວາມສະດວກທີ່ອຳນວຍໃຫ້ ແລະຍັງກະຕຸ້ນໃຫ້ເຂົາເຈົ້າປະກາດຕໍ່ຄົນທີ່ບໍ່ມັກເຂົາເຈົ້ານຳ. ສິ່ງນີ້ໄດ້ສະແດງໃຫ້ພວກເຮົາເຫັນເຖິງຄວາມຍາກລຳບາກແລະການຖືກລົບກວນ, ແຕ່ເຂົາເຈົ້າປ່ອຍໃຫ້ການກໍ່ກວນກົດຂີ່ຂົ່ມເຫັງເປັນແຮງຜັກດັນເຂົາເຈົ້າໃຫ້ໄປສູ່ສະຖານທີ່ໃໝ່ໃນການປະກາດພຣະຄຳຂອງພຣະເຈົ້າ. ບໍ່ວ່າທີ່ໃດກໍ່ຕາມທີ່ເຂົາເຈົ້າໄປ, ເຂົາເຈົ້າຈະຊັກຊວນໜູນນ້ຳໃຈທຸກຄົນໃຫ້ຕິດຕາມພຣະຄຣິດ.

2. **<u>ກິຈການ</u>** <u>11:22-24:</u>

*[22]ຂ່າວນັ້ນກໍໄດ້ເລົ່າລືໄປເຖິງໝູ່ຄຣິສຕະຈັກໃນກຸງເຢຣູຊາເລັມ ເຂົາຈຶ່ງໃຊ້ບາຣະນາບາໄປຍັງເມືອງອັນຕີໂອເຊັຽ. [23]ເມື່ອທ່ານໄດ້ມາເຖິງແລ້ວກໍໄດ້ເຫັນພຣະຄຸນທີ່ພຣະເຈົ້າຊົງໂຜດ ກໍປິຕິຍິນດີໄດ້ຕັກເຕືອນຄົນເຫລົ່ານັ້ນ ໃຫ້ຕັ້ງໃຈໝັ້ນຄົງຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ. [24]ເພາະທ່ານຜູ້ນີ້ເປັນຄົນດີ ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອ ແລະມີຄົນຈຳນວນຫລາຍສົມຄວນໄດ້ເພີ້ມເຕີມເຂົ້າມາຢູ່ຝ່າຍອົງພຣະຜູ້ເປັນເຈົ້າ.*

ຝູງຊົນຕ້ອງການຜູ້ນຳ. ກຸ່ມທີມນັກກິລາຕ້ອງການຄຣູຝຶກ, ທຸຣະກິດຕ້ອງການຜູ້ບໍຣິຫານງານ(CEO), ແລະຄຣິສຕະຈັກຕ້ອງການສິດຍາພິບານ. ຄຣິສຕະຈັກສມັຍເລີ້ມແລກມີຜູ້ນຳຊຶ່ງເປັນຄວາມຕ້ອງການຂອງຜູ້ນຳໃນກຸງເຢຣູຊາເລັມ, ແລະຜູ້ນຳທີ່ດີນັ້ນແມ່ນຊອກຫາທາງທີ່ຈະໜູນນ້ຳໃຈຄຣິສຕະຈັກອື່ນແລະແນ່ໃຈວ່າລາວສອນແລະເຮັດໃຫ້ຈະເຣີນຂຶ້ນໃນທາງທີ່ຄວນຈະເປັນ. ດັ່ງນັ້ນເຂົາເຈົ້າຈຶ່ງສົ່ງບາຣະນາບາໄປອັນຕີໂອເຊັຽ.

ບາຣະນາບາເປັນແບບຢ່າງທີ່ດີໃນຫຼາຍເຫດຜົນ. ທ່ານມາຈາກເກາະກຸບໂຣ (ກິຈການ 4: 36), ມີບາງສ່ວນຂອງຜູ້ເຊື່ອຜູ້ທີ່ລິເລີ້ມໂດຍການຊົງນຳຂອງພຣະເຈົ້າໃນອັນຕີໂອເຊັຽ. ຍັງມີຄວາມໝາຍວ່າບາຣະນາບາເປັນຜູ້ຊຳນານພາສາກຣີກ ພາສາຂອງຄົນກຣີກແລະວັທນະທັມຂອງກຣີກຫຼາຍກວ່າຊາວເຮັບເຣີ. ສິ່ງເຫຼົ່ານີ້ໄດ້ຈັດວາງຕຳແໜ່ງໃຫ້ລາວເປັນຢ່າງດີໃນການເປັນຜູ້ປຶກສາທີ່ພຣະເຈົ້າຊົງກະທຳໃນຖ້າມກາງຄົນຕ່າງຊາດ. ອັນນຶ່ງໃນອັນຕີໂອເຊັຽ, ບາຣະນາບາເຮັດສາມຢ່າງທີ່ເປັນກຸນແຈໄຂ:

1. **ລາວເຫັນຄວາມມະຫັສຈັນຂອງພຣະເຈົ້າໃນການທຳງານ.** ດ້ວຍເຫດໃດບາຣະນາບາຈຶ່ງເຫັນຄວາມມະຫັສຈັນຂອງພຣະເຈົ້າ? ລາວກຳລັງຊອກສແວງຫາ! ພຣະເຈົ້າກຳລັງທຳງານແມ່ນກະທັ້ງໃນປັດຈຸບັນ; ພວກເຮົາຕ້ອງການຕາຢ່າງນັ້ນເພື່ອຈະເບິ່ງເຫັນ.

2. **ລາວມີຄວາມປິຕິຍິນດີ.** ເມື່ອພວກເຮົາເອົາໃຈໃສ່ເບິ່ງພຣະເຈົ້າທຳງານ, ພວກເຮົາກໍຖືກດຶງດູດຄວາມສົນໃຈໃນການສັນຣະເສີນພຣະອົງ. ທັມມະຊາດຕາຝ່າຍຈິດວິນຍານແລະຫົວໃຈທີ່ຊົມຊື່ນຍິນດີຂອງບາຣະນາບາ ນຳພາລາວເຮັດສາມສິ່ງດັ່ງກ່າວ.
3. **ລາວໃຫ້ການໜຸນນ້ຳໃຈ.** ບາຣະນາບາເປັນຕົ້ນແບບທີ່ສອດຄ້ອງກັບການໜຸນນ້ຳໃຈຄົນອື່ນ. ຊື່ຈິງຂອງລາວແມ່ນໂຢເຊບ, ແຕ່ບາຣະນາບາມີນິສັຍໃນການໜຸນນ້ຳໃຈຄົນອື່ນລາວຈຶ່ງໄດ້ຊື່ໃໝ່ວ່າ ບາຣະນາບາ, ຊຶ່ງມີຄວາມໝາຍວ່າ "ຜູ້ທີ່ມີໃຈອຸດໜຸນ" ( 4:36).

ການກະທຳຂອງບາຣະນາບາເກີດມາຈາກອຸປະນິສັຍຂອງລາວ. ຂໍ້ຄວາມສັ້ນໆກ່າວວ່າ " ລາວເປັນບຸກຄົນທີ່ດີ" ເປັນຜູ້ນຶ່ງທີ່ສອດຄ້ອງຕໍ່ການປະຕິບັດຕໍ່ຄົນອື່ນດ້ວຍຄວາມຮັກແລະໃຫ້ກຽດ ລາວຍັງ "ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະຄວາມເຊື່ອ." ເມື່ອທ່ານລູກາຂຽນພຣະທັມກິຈການ, ເພິ່ນໃຊ້ຖ້ອຍຄຳເໝືອນເປັນການພັນລະນາເພື່ອສນັບສນຸນຊະເຕຟາໂນ( ກິຈການ 6:5) ນີ້ເປັນການພັນລະນາທີ່ເໝາະສົມຂອງບຸກຄົນຜູ້ເຊື່ອໃນພຣະເຈົ້າໂດຍສິ້ນເຊີງແລະຍອມສະລະຊີວິດຢູ່ໃຕ້ຣິດອຳນາດແລະການທຳງານຂອງພຣະວິນຍາບໍຣິສຸດ.

ຫວັງວ່າ, ພວກເຮົາທັງໝົດມີ " ບາຣະນາບາ" ໃນຊີວິດຂອງເຮົາ ເປັນຜູ້ທີ່ສນັບສນຸນເຮົາໃຫ້ເຕີບໂຕໃກ້ຊິດພຣະຄຣິດ. ຢ່າງໜ້ອຍທີ່ສຸດ, ພວກເຮົາສາມາດແນ່ໃຈວ່າເພື່ອນຂອງເຮົາແລະສະມາຊິກຄອບຄົວຂອງເຮົາມີ " ບາຣະນາບາ" ໃນຊີວິດຂອງເຂົາເຈົ້າ. ຖ້າພວກເຮົາຄົ້ນຫາຄວາມຈິງ ເຮົາຈະພົບວ່າຕົວເອງເປັນຜູ້ໃຫ້ກຳລັງໃຈຄົນອື່ນເຊັ່ນກັນ

**3. <u>ກິຈການ 11:25-26</u>:**

*[25]ຝ່າຍບາຣະນາບາຈຶ່ງໄປເມືອງຕາໂຊເພື່ອຊອກຫາໂຊໂລ. [26]ເມື່ອພົບແລ້ວກໍພາມາຍັງເມືອງອັນຕີໂອເຊັຽ ທ່ານທັງສອງໄດ້ເຄີຍປະຊຸມກັນກັບຄຣິສຕະຈັກຕລອດປີໜຶ່ງ ຈຶ່ງໄດ້ສັ່ງສອນຫລາຍຄົນສົມຄວນ ໃນເມືອງອັນຕີໂອເຊັຽນີ້ ພວກລູກສິດໄດ້ຖືກເອີ້ນວ່າຄຣິສະຕຽນເປັນເທື່ອທຳອິດ*

ຄຣິສຕະຈັກໃນອັນຕີໂອເຊັຽກຳລັງເຕີບໃຫ່ຍ " ແລະຄົນຈຳນວນຫຼາຍພໍສົມຄວນໄດ້ເພີ້ມເຕີມເຂົ້າມາຢູ່ຝ່າຍອົງພຣະຜູ້ເປັນເຈົ້າ" ( ກິຈການ 11: 24 ). ບາຣະນາບາຕ້ອງການຄວາມຊ່ວຍເຫຼືອ, ແລະເພິ່ນກໍຮູ້ວ່າຜູ້ໃດທີ່ເພິ່ນຕ້ອງການ ຄື: ໂຊໂລ ນັ້ນເອງ (ຜູ້ທີ່ພວກເຮົາຮູ້ໃນຖານະອັຄສາວົກໂປໂລ).

ບາຣະນາບາໄດ້ຮູ້ຈັກຄຸ້ນເຄີຍກັບໂຊໂລເປັນຢ່າງດີ, ເປັນເພື່ອນສນິດແລະຊ່ວຍເຫຼືອເພິ່ນພາຍຫຼັງປະສົບການໃນການເດີນທາງໄປດາມາເຊ. ເໝືອນກັບວ່າໂປໂລໄດ້ໃຊ້ເວລາສິບປີສິດສອນໃນຊີເຣັຽແລະກີລີເກັຽ ໃນບໍຣິເວນບ້ານຂອງເພິ່ນ( ຄາລາເຕັຽ 1:21-23) ພາຍຫຼັງການປ່ຽນແປງຄວາມເຊື່ອຂອງເພິ່ນ. ດັ່ງນັ້ນບາຣະນາບາ " ຈຶ່ງໄປເມືອງຕາໂຊເພື່ອຊອກຫາໂຊໂລ."

ທາງທີ່ດີທາງນຶ່ງຂອງກາໜຸນນ້ຳໃຈຄົນອື່ນໃຫ້ຮັບໃຊ້ແລະເຮັດພັນທະກິດ ແມ່ນໃຫ້ເຂົາເຈົ້າເຮັດວຽກຮ່ວມກັບເຮົາ. ພຣະເຢຊູເຮັດຢ່າງນີ້ກັບອັຄສາວົກສິບສອງຄົນຂອງພຣະອົງ, ໂຊໂລ( ພາຍຫຼັງເອີ້ນວ່າໂປໂລ )ຈະເຮັດຢ່າງນີ້ຄືກັນກັບຊີລາ, ຕີໂມທຽວ, ແລະລູກາ( ກິຈການ 15:40; 16: 1-3, 10-17; 20:5- 15; 21: 1-18; 27: 1-28: 16). ແລະນັ້ນແມ່ນສິ່ງທີ່ຖືກຕ້ອງທີ່ບາຣະນາບາເຮັດ, ເຊັ່ນດຽວກັນ. ໂຊໂລບໍ່ໄດ້ເປັນຜູ້ລິເລີ້ມປ່າວປະກາດ ເທສະນາແລະສິດສອນ, ແຕ່ບັດນີ້ບາຣະນາບາໄດ້ນຳເພິ່ນມາອັນຕີໂອເຊັຽເພື່ອໃຫ້ຊ່ວຍຄຣິສຕະຈັກ, ດ້ວຍຄວາມເຊື່ອມໂຍງກັນ " ພວກເພິ່ນໄດ້ຮັບການຕ້ອນຮັບຈາກທາງຄຣິສຕະຈັກແລະສິດສອນຜູ້ຄົນຢ່າງຫລວງຫລາຍ."

ໂຊໂລໄດ້ທຳການປະກາດຢູ່ເມືອງຊີໂອນ, ແລະບາຣະນາບາກຳລັງຊອກຫາໂອກາດທີ່ຈະຊັກຊວນໜຸນໃຈຄົນອື່ນໃຫ້ມາຫາພຣະຄຣິດ. ຄຣິສຕະຈັກທີ່ເມືອງອັນຕີໂອເຊັຽໄດ້ຮັບພຣະພອນໂດຍມີຜູ້ເຊື່ອແລະຄຣູສອນຈຳນວນຫຼາຍທີ່ຢູ່ພາຍໃຕ້ການນຳພາຂອງຜູ້ນຳຂອງເຂົາເຈົ້າ, ບໍ່ເປັນເຣື່ອງແປກທີ່ຄຣິສຕະຈັກນີ້ເປັນຄຣິສຕະຈັກແລກທີ່ພຣະວິນ

ຍານບໍຣິສຸດເອີ້ນແລະສົ່ງກຸ່ມຜູ້ປະກາດໄປຫາ ແລະກຸ່ມນັ້ນບໍ່ແມ່ນຄົນອື່ນນອກຈາກບາຣະນາບາແລະໂຊໂລ( ກິຈການ 13: 2). ຈົ່ງສັງເກດເບິ່ງແຜນການໃຫ້ກຳລັງໃຈຂອງບາຣະນາບາຕໍ່ໂຊໂລ. ບາຣະນາບາເປັນຜູ້ອອກໄປຊອກຫາ " ໂຊໂລ ມີຊື່ນຶ່ງອີກວ່າໂປໂລ"(ຂໍ້ 9 ) ພວກເພິ່ນໄດ້ຮັບໃຊ້ຮ່ວມກັນໃນຕອນເລີ້ມຕົ້ນໃນຖານະ "ບາຣະນາບາແລະໂຊໂລ." ໃນການກ້າວເດີນໄປຂ້າງໜ້າຂອງງານປະກາດຂອງພວກເພິ່ນ, ເຖິງແມ່ນວ່າ, ໂປໂລໄດ້ມີບົດບາດ ມີຊື່ສຽງຫຼາຍກວ່າ ຕລອດເວລາ ພວກເພິ່ນກໍຍັງກາຍມາເປັນ "ໂປໂລແລະບາຣະນາບາ"( ຂໍ້ 43). ບາຣະນາບາແມ່ນມີຄວາມຕັ້ງໃຈຢູ່ເບື້ອງຫຼັງເພື່ອຈະໃຫ້ໂປໂລກາຍເປັນຜູ້ນຳ.

ພວກເຮົາສາມາດໜູນກຳລັງໃຈໃຫ້ຄົນອື່ນກ້າວຂຶ້ນແລະຮັບໃຊ້ຢ່າງໃດ? ໃນເມື່ອເຮົາຕິດຕາມແບບຢ່າງຂອງບາຣະນາບາ ພວກເຮົາສາມາດ:

- **ຈົ່ງເຮັດໃຫ້ເຂົາເບິ່ງ.** ເມື່ອທ່ານກຳລັງສອນແລະກຳລັງໃຫ້ຄຳປຶກສາຈົ່ງເລີ້ມດ້ວຍການເປັນແບບຢ່າງວ່າເຮັດແບບໃດ. ຕົວຢ່າງ, ປ່ອຍໃຫ້ບຸກຄົນນັ້ນສັງເກດເບິ່ງທ່ານທີ່ກຳລັງແບ່ງປັນຄວາມເຊື່ອຂອງທ່ານ.
- **ຮັບໃຊ້ຮ່ວມກັນ.** ໃຫ້ໂອກາດຄົນນັ້ນມີສ່ວນຮ່ວມເຮັດນຳກັນ ແລະນຳພາຢ່າງຖືກຕ້ອງຄຽງຂ້າງທ່ານ.
- **ປ່ອຍໃຫ້ເຮັດ.** ປ່ອຍໂອກາດໃຫ້ຄົນນັ້ນໄດ້ທຳງານຫຼືປະກາດດ້ວຍຕົວລາວເອງ. ທ່ານເປັນທີ່ປຶກສາ, ຄຣູຝຶກ, ແລະຜູ້ແນະນຳ. ບັດນີ້ປ່ອຍໃຫ້ຄົນນັ້ນເຮັດງານນັ້ນ, ແຕ່ທ່ານຕ້ອງຢູ່ກັບລາວດ້ວຍການໃຫ້ກຳລັງໃຈແລະອະທິຖານເພື່ອລາວຕລອດເວລາ.

ການໃຫ້ກຳລັງໃຈຄົນອື່ນເປັນການນຳເອົາຜົນດີໃນທຸກບ່ອນທີ່ພວກເຮົາໄປ ທັງຂ້າງໃນແລະຂ້າງນອກຄຣິສຕະຈັກ. ຫາໂອກາດໃຫ້ກຳລັງໃຈຄົນອື່ນໃນຄວາມສັມພັນຂອງລາວກັບພຣະເຈົ້າແລະໃນຄວາມສັມພັນຂອງລາວກັບຄົນອື່ນ.

## ນຳໃຊ້ໃນຊີວິດ.

**ພວກເຮົາຢູ່ອ້ອມຮອບດ້ວຍຄົນທີ່ຕ້ອງການຈະຮັບເອົາກຳລັງໃຈ. ທ່ານຈະໃຫ້ການໜູນນ້ຳໃຈຄົນອື່ນໃຫ້ເຕີບໂຕໃນພຣະຄຣິດແລະຮັບໃຊ້ພຣະອົງຢ່າງໃດ?**

- **ຈົດໝາຍຂອບໃຈ.** ພິສູດໃຫ້ຄົນນັ້ນວ່າທ່ານເປັນຜູ້ໃຫ້ກຳລັງໃຈແກ່ລາວ ຂຽນຈົດໝາຍເຖິງລາວແລະສະແດງຄວາມຮູ້ສຶກຂອບໃຈສຳລັບການຊ່ວຍເຫຼືອແລະການໃຫ້ກຳລັງໃຈຂອງທ່ານ.
- **ຄຳເວົ້າໃຫ້ກຳລັງໃຈ.** ໃຊ້ເວລາໃນທິດນີ້ໜູນນ້ຳໃຈບາງຄົນໃນການເດີນໄປກັບພຣະເຈົ້າຂອງລາວ ໂທຣະສັບ, ຂຽນຈົດໝາຍ, ຫຼືເດີນຄຽງຂ້າງບາງຄົນທີ່ທ່ານຮູ້ວ່າລາວຕ້ອງການຄຳເວົ້າທີ່ໃຫ້ກຳລັງໃຈ.
- **ຄວາມສັມພັນຂອງການໜູນນ້ຳໃຈ.** ພັທະນາຄວາມສັມພັນຢ່າງບໍ່ຢຸດຢັ້ງກັບບາງຄົນ ລວມທັງການຊຸມນຸມເປັນປະຈຳ. ເປັນທີ່ປຶກສາຄົນນີ້ໂດຍສະເພາະພາກສ່ວນຂອງຊີວິດແລະການໜູນນ້ຳໃຈໃຫ້ລາວເຕີບໂຕໃນພຣະຄຣິດ.

ທ່ານພ້ອມແລ້ວບໍ່ທີ່ຈະເຫັນການໜູນນ້ຳໃຈແລະການໃຫ້ການຊ່ວຍເຫຼືອເກີດຂຶ້ນໃນຄຣິສະຈັກຂອງທ່ານ? ໃນຊຸມຊົນຂອງທ່ານ? ຖ້າດັ່ງນັ້ນ, ທ່ານເປັນຜູ້ນຶ່ງທີ່ສາມາດເຮັດໃຫ້ເກີດມີການປ່ຽນແປງໂດຍການເລືອກທີ່ຈະໜູນນ້ຳໃຈຜູ້ທີ່ຢູ່ອ້ອມຮອບທ່ານໃຫ້ເຕີບໂຕໃນພຣະຄຣິດແລະຈະເຣີນຂຶ້ນຮ່ວມກັນເປັນພຣະກາຍຂອງພຣະອົງ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**